ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----====00000====----

ກະຊວງ ກະສິກຳ ແລະ ປ່າໄມ້.

ເລກທີ 0261 /ກປ.2000.

ວຽງຈັນ, ວັນທີ 30 NOV 2000

# ລະບຽບການ

## ວ່າດ້ວຍ ການຄຸ້ມຄອງ ໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພົນປ່າໄມ້

- ອີງຕາມ ກົດໝາຍປ່າໄມ້ ສະບັບ ເລກທີ 01- 96, ລົງວັນທີ 11/10/96.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງປະຕິບັດ ກົດໝາຍປ່າໄມ້ ສະບັບ ເລກທີ 198/ນຍ, ລົງວັນທີ 15/11/1999.

ເພື່ອເຮັດໃຫ້ ວຽກງານ ການຄຸ້ມຄອງໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພົນປ່າໄມ້ ໃນ ສ.ປ.ປ.ລາວ ສອດຄ່ອງກັບ ເນື້ອໃນຈິດໃຈ ຂອງກົດໝາຍປ່າໄມ້.

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກ ລະບຽບ :

## ໝວດທີ 1
## ບົດບັນຍັດ ທົ່ວໄປ

**ມາດຕາ 1 :** ຈຸດປະສົງ

ຈຸດປະສົງ ຂອງລະບຽບການ ຄຸ້ມຄອງ ໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພົນປ່າໄມ້ ແນໃສ່ :

1. ຮັບປະກັນ ການສ້າງຕັ້ງ, ການດຳເນີນກິດຈະການ, ການຂະຫຍາຍ ຫຼື ການດັດແປງ, ການຍ້າຍ ໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພົນປ່າໄມ້ ໃຫ້ຖືກຕ້ອງ ຕາມລະບຽບການ.
2. ຮັບປະກັນ ການນຳໃຊ້ ວັດຖຸດິບ ໃຫ້ໄດ້ຮັບ ຜົນປະໂຍດ ສູງສຸດ, ຂະໜາດມາດຕະຖານ ແລະ ຄຸນນະພາບ ຂອງຜະລິດຕະພັນ.
3. ຮັບປະກັນ ຄວາມປອດໄພ ທາງດ້ານ ຊີວິດ ແລະ ຊັບສິນ ຂອງກຳມະກອນ ແລະ ເຈົ້າຂອງໂຮງງານ.
4. ຮັບປະກັນ ບໍ່ໃຫ້ເກີດ ຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເກີນກວ່າ ມາດຕະຖານ ທີ່ອີງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ໄດ້ກຳນົດໄວ້.

ມາດຕາ 2 : ນິຍາມ

ມົນລະພິດ : ແມ່ນ ສິ່ງເປິເປື້ອນ ທີ່ເປັນພິດ ເຊິ່ງສົ່ງຜົນສະທ້ອນ ອັນບໍ່ດີ ຕໍ່ ສຸກຂະພາບ ຂອງ ຄົນ, ສັດ ແລະ ຄຸນນະພາບ ສິ່ງແວດລ້ອມ.

ສິ່ງເສດເຫຼືອ : ແມ່ນ ວັດຖຸ ເປັນອັນຕະລາຍ ຫຼື ບໍ່ເປັນອັນຕະລາຍ ທີ່ຢູ່ໃນ ສະພາບແຂງ, ແຫຼວ ຫຼື ທາດອາຍ ເຊິ່ງຖືກປ່ອຍຖິ້ມ ຈາກ ການຜະລິດ ແລະ ການນຳໃຊ້ ຢູ່ໃນສັງຄົມ.

## ໝວດທີ 2

## ການສ້າງຕັ້ງ, ການດຳເນີນກິດຈະການ, ການຂະຫຍາຍ ຫຼື ການດັດແປງ ໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພົນປ່າໄມ້

ມາດຕາ 3 : ການສ້າງຕັ້ງ,ການດຳເນີນກິດຈະການ, ການຂະຫຍາຍ ຫຼື ການດັດແປງໂຮງງານ

- ການສ້າງຕັ້ງ ໂຮງງານປຸງແຕ່ງໄມ້ ຫລື ໂຮງງານປຸງແຕ່ງ ຜະລິດຕະພົນປ່າໄມ້ ຕ້ອງ ປະຕິບັດ ຕາມ ລະບຽບການ ວ່າດ້ວຍ ການສ້າງຕັ້ງ ໂຮງງານປຸງແຕ່ງໄມ້ ຫລື ໂຮງງານ ປຸງແຕ່ງ ຜະລິດຕະພົນປ່າໄມ້ ຢ່າງເຂັ້ມງວດ ແລະ ຕ້ອງໄດ້ຮັບ ອະນຸຍາດ ຈາກ ກະຊວງ ກະສິກຳ - ປ່າໄມ້ ແລະ ອົງການອື່ນໆທີ່ກ່ຽວຂ້ອງ. ການເຄື່ອນໄຫວ ໂຮງງານດັ່ງກ່າວ ຕ້ອງປະຕິບັດ ຕາມ ລະບຽບການເຊັ່ນ : ການນຳໃຊ້ ວັດຖຸດິບ ທີ່ຖືກຕ້ອງ ແລະ ໃຊ້ໝົດ ຄຸນຄ່າ, ການຈຳໜ່າຍ ຜະລິດຕະພັນປຸງແຕ່ງ ໃຫ້ຖືກຕ້ອງ ຕາມ ລະບຽບການ.

ມາດຕາ 4 : ການປະກອບເອກະສານ ຂໍອະນຸຍາດ ສ້າງຕັ້ງ,ດຳເນີນ,ຂະຫຍາຍ ຫຼື ດັດແປງໂຮງງານ

4.1 ການຂໍອະນຸຍາດ ສ້າງຕັ້ງໂຮງງານ ຕ້ອງປະກອບ ເອກະສານ ຄື :

4.1.1 ໃບຄຳຮ້ອງ ເຖິງກະຊວງ ກະສິກຳ ແລະ ປ່າໄມ້ ໂດຍຜ່ານ ຂະແໜງປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

4.1.2 ຊີວະປະຫວັດຫຍໍ້,ໃບຢັ້ງຢືນທີ່ຢູ່,ໃບແຈ້ງໂທດ ແລະໃບຢັ້ງຢືນ ສິດນຳໃຊ້ທີ່ດິນ.

4.1.3 ບົດວິພາກ ເສດຖະກິດ - ເຕັກນິກ, ບົດຕີລາຄາ ຜົນກະທົບ ຕໍ່ ສິ່ງແວດລ້ອມ ພ້ອມກົດລະບຽບ ແລະ ໂຄງຮ່າງ ການຈັດຕັ້ງ ພາຍໃນໂຮງງານ.

4.1.4 ແຜນວາດ ແຜນຜັງ ຂອງໂຮງງານ ຕ້ອງໄດ້ຮັບ ການຢັ້ງຢືນ ຈາກ ຂະແໜງການ ຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ.

4.1.5 ໃບແຈ້ງ ຖານະທາງດ້ານການເງິນ ຈາກ ທະນາຄານ.

4.1.6 ໃບອະນຸຍາດລົງທຶນ ຈາກຄະນະກຳມະການຄຸ້ມຄອງ ການລົງທຶນ ພາຍໃນ ແລະຮ່ວມມື ເສດຖະກິດ ກັບຕ່າງປະເທດ.

4.2. ການສະເໜີ ຂໍອະນຸຍາດ ດຳເນີນການຜະລິດ ຕ້ອງປະກອບ ເອກະສານ ຄື:

4.2.1 ໃບຄຳຮ້ອງ ເຖິງກະຊວງ ກະສິກຳ ແລະ ປ່າໄມ້ ໂດຍຜ່ານ ຂະແໜງປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ ແລະ ເຂດພິເສດ.
4.2.2 ໃບອະນຸຍາດ ສ້າງຕັ້ງ.
4.2.3 ໃບທະບຽນ ວິສາຫະກິດ.
4.2.4 ແຜນການຜະລິດ.
4.2.5 ໃບຢັ້ງຢືນ ການກວດກາ ສະພາບໂຮງງານ.

4.3. ການສະເໜີ ຂໍສືບຕໍ່ ດຳເນີນການຜະລິດ ຕ້ອງປະກອບ ເອກະສານຄື:

4.3.1 ໃບຄຳຮ້ອງ ເຖິງ ກະຊວງ ກະສິກຳ ແລະ ປ່າໄມ້ ໂດຍຜ່ານ ຂະແໜງປ່າໄມ້, ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.
4.3.2 ໃບທະບຽນ ວິສາຫະກິດ.
4.3.3 ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້ ສະບັບສຸດທ້າຍ, ບົດສະຫຼຸບ ການດຳເນີນ ການຜະລິດ ແລະ ແຜນການຜະລິດ ໃນຕໍ່ໜ້າ.
4.3.4 ໃບຢັ້ງຢືນ ການປະຕິບັດ ພັນທະຕ່າງ ໆ ຕາມລະບຽບການ.
4.3.5 ບົດບັນທຶກການກວດກາສະພາບໂຮງງານ

**ມາດຕາ 5 : ເງື່ອນໄຂ ຂອງການສ້າງຕັ້ງ, ການດຳເນີນ ແລະ ການຂະຫຍາຍ ໂຮງງານ**

ເງື່ອນໄຂ ຂອງໂຮງງານ ທີ່ຈະໄດ້ຮັບ ອະນຸຍາດ ໃຫ້ ສ້າງຕັ້ງ, ດຳເນີນ ແລະ ຂະຫຍາຍ ຕ້ອງມີ ດັ່ງນີ້ :

1. ສຳລັບ ໂຮງງານ ທີ່ຈະ ສ້າງຕັ້ງໃໝ່ນັ້ນ ຕ້ອງຕັ້ງຢູ່ ຫ່າງໄກ ຈາກເທດສະບານເມືອງ ແລະ ໄກຈາກ ເຂດ ຊຸມຊົນແອອັດ ຕາມ ຄວາມເໝາະສົມ. ສະເພາະ ຢູ່ບັນດາ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ທີ່ໄດ້ ມີການຈັດສັນ ແລະ ໄດ້ວາງແຜນ ໄວ້ແລ້ວ ຕ້ອງປະຕິບັດ ຕາມ ແຜນຜັງ ທີ່ໄດ້ ຈັດສັນໄວ້.

2. ການປຸກສ້າງ ໂຮງງານ ຕ້ອງຮັບປະກັນ ທາງດ້ານ ມາດຖານເຕັກນິກ, ມີລະບົບ ປ້ອງກັນ ສິ່ງແວດລ້ອມ ແລະ ປ້ອງກັນແຮງງານ ເປັນຢ່າງດີ.
3. ມາດຕະຖານ ຂອງເຄື່ອງຈັກ ທີ່ປະກອບເຂົ້າໃນໂຮງງານ ຕ້ອງແມ່ນ ເຄື່ອງຈັກໃໝ່,

ຄຸນນະພາບດີ ແລະທັນສະໄໝ.ການຕິດຕັ້ງເຄື່ອງຈັກ ຕ້ອງຈັດເປັນລະບົບ ແລະຖືກຕ້ອງ ຕາມເຕັກນິກວິຊາການ.

**ມາດຕາ 6 : ການກຳນົດ ເວລາ ຂອງການສ້າງຕັ້ງ, ການດຳເນີນ, ການຂະຫຍາຍ ຫຼື ການດັດແປງ ໂຮງງານ**

ການສະເໜີ ຂໍອະນຸຍາດ ສ້າງຕັ້ງ, ດຳເນີນ, ຂະຫຍາຍ ຫຼື ດັດແປງ ໂຮງງານ ກະຊວງ ກະສິກຳ ແລະ ປ່າໄມ້ ຈະໄດ້ພິຈາລະນາ ແລະ ໃຫ້ຄຳຕອບ ພາຍໃນ 30 ວັນ.

**ມາດຕາ 7 : ການປະຕິບັດ ກຳນົດເວລາ ຕາມໃບອະນຸຍາດ ສ້າງຕັ້ງ ໂຮງງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ສ້າງຕັ້ງໂຮງງານ ຕ້ອງຮີບຮ້ອນ ກໍ່ສ້າງໂຮງງານ ຂອງຕົນ ໃຫ້ສຳເລັດ ຕາມກຳນົດ ເວລາ ທີ່ໄດ້ ລະບຸໄວ້ ໃນໃບອະນຸຍາດ ສ້າງຕັ້ງ

1. ກໍລະນີ ການກໍ່ສ້າງ ບໍ່ສຳເລັດ ຕາມກຳນົດ ຜູ້ທີ່ໄດ້ ຮັບອະນຸຍາດ ຕ້ອງສະເໜີ ຂໍຕໍ່ອາຍຸ ການກໍ່ສ້າງ ຈາກກະຊວງກະສິກຳ ແລະ ປ່າໄມ້ ພາຍໃນ 15 ວັນ ກ່ອນອະນຸຍາດສ້າງຕັ້ງ ຈະໝົດ ກຳນົດ.
2. ກະຊວງກະສິກຳ ແລະ ປ່າໄມ້ ຈະພິຈາລະນາ ຕໍ່ອາຍຸ ການກໍ່ສ້າງ ໃຫ້ອີກ ບໍ່ເກີນ ເຄິ່ງນຶ່ງ ຂອງອະນຸຍາດ ທີ່ອອກໃຫ້ ໃນເບື້ອງຕົ້ນ ຖ້າເຫັນວ່າ ມີຄວາມຈຳເປັນ ໂດຍອັດຕະວິໄສ.
3. ໃນ ກໍລະນີ ການກໍ່ສ້າງ ຫາກບໍ່ສຳເລັດ ຕາມ ກຳນົດເວລາ ທີ່ໄດ້ ອະນຸຍາດຕໍ່ໃຫ້ນັ້ນ ຖືວ່າ ອະນຸຍາດສ້າງຕັ້ງ ໂຮງງານດັ່ງກ່າວ ແມ່ນ ຖືກລົບລ້າງ ໄປໃນຕົວ.

**ມາດຕາ 8 : ການກຳນົດ ອາຍຸ ການນຳໃຊ້ ຂອງໃບອະນຸຍາດ ດຳເນີນກິດຈະການ ໂຮງງານ ແລະ ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້**

1. ບຸກຄົນແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ໃຫ້ສ້າງຕັ້ງໂຮງງານ ເມື່ອສ້າງຕັ້ງ ສຳເລັດ ແລ້ວ ກ່ອນຈະເປີດ ດຳເນີນງານ ຕ້ອງສະເໜີຂໍ ໃບອະນຸຍາດ ດຳເນີນ ກິດຈະການ ໂຮງງານ ຫຼື ໃບຂໍເລື່ອນ ການດຳເນີນ ກິດຈະການຂອງໂຮງງານ ຈາກກະຊວງ ກະສິກຳ ແລະ ປ່າໄມ້ ພາຍໃນ 30 ວັນ ນັບແຕ່ ວັນທີ ສ້າງຕັ້ງໂຮງງານ ສຳເລັດ ເປັນຕົ້ນໄປ.
2. ໃບອະນຸຍາດ ຂໍເລື່ອນ ການດຳເນີນ ກິດຈະການໂຮງງານ ມີອາຍຸການ ບໍ່ເກີນ ເຄິ່ງນຶ່ງ ຂອງໃບອະນຸຍາດ ດຳເນີນ ກິດຈະການໂຮງງານ.
3. ກົມປ່າໄມ້ ສົມທົບ ກັບພາກສ່ວນ ກ່ຽວຂ້ອງ ລົງກວດກາ ໂຮງງານ ແລະ ເຄື່ອງຈັກ ຖ້າ ເຫັນວ່າ ຖືກຕ້ອງ ຕາມມາດຕາ 5 ຂອງລະບຽບການ ສະບັບນີ້ ຄະນະກຳມະການ ຈະ ສະເໜີ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບ ເພື່ອພິຈາລະນາ ອອກໃບອະນຸຍາດ ດຳເນີນ ກິດຈະການໂຮງງານ.
4. ໃບອະນຸຍາດ ດຳເນີນ ກິດຈະການໂຮງງານ ໃຊ້ໄດ້ ກຳນົດ 3 ປີ ແລະ ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້ ໃຊ້ໄດ້ກຳນົດ 1 ປີ ແລະ ສາມາດ ຕໍ່ໃໝ່

ເມື່ອເຫັນວ່າ ໂຮງງານ ຍັງສືບຕໍ່ ດຳເນີນ ກິດຈະການ ຫຼື ດຳເນີນ ການຜະລິດ ຖືກຕ້ອງ ສອດຄ່ອງ ກັບລະບຽບການ ສະບັບນີ້.

5. ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ໃບອະນຸຍາດ ດຳເນີນການຜະລິດ ໂຮງງານ ແລະ ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້ ຕ້ອງສະແດງ ໃບອະນຸຍາດ ດັ່ງກ່າວ ໄວ້ໃນ ບ່ອນທີ່ ເປີດເຜີຍ ແລະ ເຫັນໄດ້ງ່າຍ ໃນໂຮງງານ ຂອງຕົນ.

**<u>ມາດຕາ 9</u> : ການຂໍຕໍ່ອາຍຸ ແລະ ບໍ່ຕໍ່ອາຍຸ ຂອງໃບອະນຸຍາດ ດຳເນີນ ກິດຈະການ ໂຮງງານ ຫລື ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້**

1. ການຂໍ ຕໍ່ອາຍຸ ໃບອະນຸຍາດ ດຳເນີນ ກິດຈະການ ໂຮງງານ ຫລື ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້ ຕ້ອງປະກອບ ຄຳຮ້ອງ ຫາ ກະຊວງ ກະສິກຳ ແລະ ປ່າໄມ້ ໂດຍ ຜ່ານ ພະແນກ ກະສິກຳ ແລະປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ກ່ອນອາຍຸ ຂອງໃບອະນຸຍາດເກົ່າ ຈະໝົດກຳນົດ 15 ວັນ.

2. ບັນດາໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້ ທີ່ບໍ່ໄດ້ຕໍ່ອາຍຸ ຂອງໃບດຳເນີນ ກິດຈະການ ໂຮງງານ ຫລື ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້ ຈະບໍ່ ອະນຸຍາດ ໃຫ້ດຳເນີນ ການຜະລິດ ຢ່າງເດັດຂາດ.

3. ກະຊວງ ກະສິກຳ ແລະ ປ່າໄມ້ ຈະແຈ້ງການເປັນທາງການ ໃຫ້ບຸກຄົນ ແລະ ການຈັດຕັ້ງ ຊາບ ພາຍໃນ 15 ວັນ ໃນການປະຕິເສດ ບໍ່ຕໍ່ອາຍຸ ໃບອະນຸຍາດ ດຳເນີນ ກິດຈະການ ໂຮງງານ ຫລື ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້ ໂດຍເຫດຜົນ ທາງດ້ານ ເຕັກນິກ ແລະ ລະບຽບການ.

**<u>ມາດຕາ 10</u> : ການຢຸດເຊົາ ການດຳເນີນ ກິດຈະການໂຮງງານ**

1. ບຸກຄົນ ແລະ ການຈັດຕັ້ງ ຢຸດ ການດຳເນີນ ກິດຈະການ ຊົ່ວຄາວ ຕິດຕໍ່ກັນ ເກີນກ່ວາ 6 ເດືອນ ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ພະແນກ ກະສິກຳ ແລະປ່າໄມ້ແຂວງ, ກຳແພງນະຄອນ ແລະເຂດພິເສດ.

2. ບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງ ຢຸດເຊົາ ການດຳເນີນ ກິດຈະການໂຮງງານ ຢ່າງສິ້ນເຊີງ ຕ້ອງລາຍງານ ເປັນລາຍລັກອັກສອນ ໃຫ້ກະຊວງ ກະສິກຳ ແລະປ່າໄມ້ ຮັບຮູ້ ພາຍໃນ 15 ວັນ ນັບແຕ່ ວັນຢຸດເຊົາ ເປັນຕົ້ນໄປ ໂດຍຜ່ານ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ ແລະເຂດພິເສດ.

**<u>ມາດຕາ 11</u> : ການຂະຫຍາຍ ໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພັນປ່າໄມ້**

ບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງ ຂະຫຍາຍໂຮງງານ ຕ້ອງໄດ້ ຂໍອະນຸຍາດ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້.

**<u>ມາດຕາ 12</u>: ການປ່ຽນ ຫຼື ດັດແປງ ເຄື່ອງຈັກ ພາຍໃນໂຮງງານ**

ບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງ ພຽງແຕ່ປ່ຽນ ຫຼື ດັດແປງ ເຄື່ອງຈັກ ທີ່ໃຊ້ ໃນການຜະລິດ ຫຼື ເຄື່ອງຈັກ ທີ່ໃຊ້ ເປັນແຫຼ່ງ ກຳເນີດ ກຳລັງແຮງ ລວມ ແຕ່ບໍ່ມີ ຄວາມຈຳເປັນ ຂະຫຍາຍໂຮງງານ ຕ້ອງຂໍອະນຸຍາດນຳພະແນກ ກະສິກຳ ແລະປ່າໄມ້ແຂວງ,ກຳແພງນະຄອນ ແລະ ເຂດພິເສດ ແລ້ວ ແຈ້ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ຮູ້ ພາຍໃນ 30 ວັນ ນັບແຕ່ ວັນທີ່ ໄດ້ປ່ຽນ ຫຼື ດັດແປງແລ້ວ.

**<u>ມາດຕາ 13</u>: ການປ່ຽນຊື່ໂຮງງານ ຫຼື ຊື່ເຈົ້າຂອງໂຮງງານ**

ບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງ ປ່ຽນຊື່ໂຮງງານ ຫຼື ຊື່ເຈົ້າຂອງໂຮງງານ ຕ້ອງຂໍອະນຸຍາດນຳພະແນກ ກະສິກຳ ແລະປ່າໄມ້ແຂວງ,ກຳແພງນະຄອນ,ເຂດພິເສດ ແລະພະແນກການທີ່ກ່ຽວຂ້ອງ ແລ້ວແຈ້ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ຮູ້ ພາຍໃນ 15 ວັນ ນັບແຕ່ ວັນທີ່ ໄດ້ມີ ການປ່ຽນ.

**<u>ມາດຕາ 14</u>: ການສູນຫາຍ ຫຼື ຖືກທຳລາຍ ໃບອະນຸຍາດ ດຳເນີນກິດຈະການໂຮງງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ເຮັດ ໃບອະນຸຍາດ ດຳເນີນກິດຈະການ ໂຮງງານສູນຫາຍ ຫຼື ຖືກທຳລາຍ ຕ້ອງແຈ້ງໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ ແລະເຂດພິເສດ ຮູ້ພາຍໃນ 15 ວັນ ນັບແຕ່ວັນທີ່ ຖືກສູນຫາຍ ຫຼື ທຳລາຍ ເພື່ອ ສະເໜີ ຂໍຮັບ ໃບໃໝ່ແທນ.

**<u>ມາດຕາ 15</u>: ການຍ້າຍເຄື່ອງຈັກ ຂອງໂຮງງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຍ້າຍເຄື່ອງຈັກ ບາງສ່ວນ ອອກຈາກ ທີ່ຕິດຕັ້ງເດີມ ໃນໂຮງງານ ໄປຍັງ ສະຖານທີ່ອື່ນ ເພື່ອ ປະກອບ ກິດຈະການ ທີ່ໄດ້ຮັບ ອະນຸຍາດ ຕ້ອງສະເໜີ ແຜນຜັງ,ເຫດຜົນ ທາງດ້ານເຕັກນິກ ແລະ ລາຍລະອຽດຕ່າງໆໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ,ກຳແພງນະຄອນ ແລະ ເຂດພິເສດ ພິຈາລະນາ ອະນຸມັດ ແລ້ວລາຍງານ ກະຊວງ ກະສິກຳ ແລະ ປ່າໄມ້ ຮັບຊາບ.

ມາດຕາ 16: **ການຍ້າຍໂຮງງານ ໄປຍັງສະຖານທີ່ອື່ນ**

ບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ຍ້າຍໂຮງງານໄປຍັງ ສະຖານທີ່ອື່ນ ຕ້ອງແຈ້ງເຫດຜົນ ສະເໜີ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເພື່ອຄົ້ນຄວ້າ ປະກອບຄຳເຫັນ ໂດຍໃຫ້ສອດຄ່ອງ ຕາມເນື້ອໃນຈິດໃຈທີ່ລະບຸໄວ້

ໃນມາດຕາ 5 ຂອງລະບຽບການ ສະບັບນີ້ ແລ້ວ ນຳສະເໜີ ຕໍ່ ກະຊວງ ກະສິກຳ ແລະ ປ່າໄມ້ ພິຈະລະນາ ອະນຸມັດ.

ມາດຕາ 17: **ອຸປະຕິເຫດ ທີ່ເກີດຂຶ້ນ ໃນໂຮງງານ ຍ້ອນ ເຄື່ອງຈັກ ຂອງໂຮງງານ, ໄພທຳມະຊາດ ຫລືເຫດການ ເຄື່ອນໄຫວ ຕ່າງ ໆ ພາຍໃນໂຮງງານ**

1. ບຸກຄົນ ແລະ ການຈັດຕັ້ງ ຜູ້ມີໜ້າທີ່ ຮັບຜິດຊອບ ໂຮງງານ ຕ້ອງລາຍງານ ເປັນລາຍລັກອັກສອນ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຮູ້ພາຍໃນ 24 ຊົ່ວໂມງ ແລະ ແຈ້ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ຮູ້ ພາຍໃນ 3 ວັນ ນັບແຕ່ ເວລາເກີດອຸປະຕິເຫດ ທີ່ເຮັດໃຫ້ ບຸກຄົນ ເຖິງແກ່ ຄວາມຕາຍ, ບາດເຈັບໜັກ ຫຼື ສູນເສຍ ທາງ ດ້ານຊັບສິນ ຢ່າງຫລວງຫລາຍ.

2. ບຸກຄົນ ແລະ ການຈັດຕັ້ງ ຜູ້ມີໜ້າທີ່ ຮັບຜິດຊອບ ໂຮງງານ ຕ້ອງລາຍງານ ເປັນລາຍລັກອັກສອນ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ພ້ອມດຽວກັນນັ້ນ ກໍຕ້ອງແຈ້ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ຮູ້ ພາຍໃນ 15 ວັນ ນັບແຕ່ ວັນເກີດ ອຸປະຕິເຫດ ທີ່ເຮັດໃຫ້ ໂຮງງານ ຢຸດສະງັກ ເກີນກ່ວາ 7 ວັນ.

ມາດຕາ 18: **ການຊື້ - ຂາຍ ຫຼື ໂອນ ກຳມະສິດໂຮງງານ**

ໃນກໍລະນີ ຢາກ ຊື້ - ຂາຍ ຫຼື ໂອນ ກຳມະສິດໂຮງງານ ໃຫ້ຜູ້ອື່ນ ເຈົ້າຂອງໂຮງງານຕ້ອງໄດ້ ປະກອບ ສຳນວນເອກະສານ ໃຫ້ຄົບຖ້ວນ ໂດຍຜ່ານ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເພື່ອນຳສະເໜີ ຂໍອະນຸມັດ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້ .

ມາດຕາ 19: **ການໃຫ້ເຊົ່າ ຫຼື ເຊົ່າຊື້ ກິດຈະການໂຮງງານ**

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບ ອະນຸຍາດ ດຳເນີນກິດຈະການໂຮງງານ ມີຈຸດປະສົງ ໂອນ ການດຳເນີນ ກິດຈະການໂຮງງານ ໃຫ້ຜູ້ອື່ນ ເຊົ່າ ຫຼື ໃຫ້ເຊົ່າຊື້ ໄປແລ້ວ ຖືວ່າເຈົ້າຂອງໂຮງງານເກົ່າ ຍົກເລີກ ການດຳເນີນ ກິດຈະການ ໂຮງງານ ນັບແຕ່ວັນທີໂອນການດຳເນີນ ກິດຈະການໂຮງງານ ໃຫ້ເຊົ່າ ຫຼື ໃຫ້ເຊົ່າຊື້.

ບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບໂອນກິດຈະການໂຮງງານ ຈາກເຈົ້າຂອງເກົ່າສາມາດ ສະເໜີ ຂໍຮັບ ໃບອະນຸຍາດ ດຳເນີນ ກິດຈະການໂຮງງານ ອອກເປັນ ຊື່ຂອງຕົນ ພາຍໃນ 15 ວັນ ນັບແຕ່ ວັນທີ່ ໄດ້ໂອນ ກິດຈະການ ແລະ ດຳເນີນ ກິດຈະການ ຂອງຕົນເອງໄດ້ ຕາມ ປົກກະຕິ ໃນ ລະຫວ່າງ ວັນ ແລະ ໄລຍະເວລາ ຂອງອາຍຸ ໃບອະນຸຍາດເດີມ ທີ່ຍັງ ເຫຼືອ ເທົ່ານັ້ນ.

**ມາດຕາ 20: ການສືບທອດ ການດຳເນີນ ກິດຈະການໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພົນປ່າໄມ້**

ໃນກໍລະນີ ທີ່ ບຸກຄົນ ຜູ້ທີ່ໄດ້ຮັບ ໃບອະນຸຍາດ ດຳເນີນ ກິດຈະການ ໂຮງງານ ເສຍຊີວິດ ຫຼື ບໍ່ສາມາດ ບໍລິຫານງານ ຕໍ່ໄປໄດ້ ແລະໃນກໍລະນີ ທີ່ການຈັດຕັ້ງ ຂອງໂຮງງານມີການ ປ່ຽນແປງໃຫ້ຜູ້ສືບທອດ ຫຼືຜູ້ຄຸ້ມຄອງມໍລະດົກ ສະເໜີຫາ ກະຊວງ ກະສິກຳ ແລະປ່າໄມ້ ໂດຍຜ່ານ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ເພື່ອຮັບໂອນ ໃບດຳເນີນກິດຈະການ ໂຮງງານ ເປັນຜູ້ສືບທອດພາຍໃນ 90 ວັນ ນັບແຕ່ ເຈົ້າຂອງໂຮງງານເດີມ ເສຍຊີວິດ ຫຼື ມອບສິດ. ໃນໄລຍະນີ້ ບຸກຄົນ ແລະ ການຈັດຕັ້ງ ທີ່ມີສິດສືບທອດ ຫຼືຜູ້ຄຸ້ມຄອງມໍລະດົກ ເຊິ່ງເຂົ້າດຳເນີນກິດຈະການໂຮງງານແທນ ມີສິດ ອຳນາດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຄືກັນກັບ ເຈົ້າຂອງເດີມ.

**ມາດຕາ 21: ການນຳເຂົ້າ ເຄື່ອງຈັກຊຸດຄົ້ນໄມ້, ປຸງແຕ່ງໄມ້ ແລະ ຜະລິດຕະພົນປ່າໄມ້**

ກ່ອນຈະນຳເຂົ້າ ເຄື່ອງຈັກຕັດໄມ້, ເຄື່ອງຈັກ ສຳລັບປຸງແຕ່ງໄມ້,ໄມ້ປ່ອງ, ຫວາຍ ແລະ ເຄື່ອງປ່າຂອງດົງ ທຸກຊະນິດ ເຂົ້າມາໃນ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເພື່ອ ຕິດຕັ້ງໃໝ່, ຕິດຕັ້ງເພີ້ມ ຫຼື ປ່ຽນຖ່າຍ ເຄື່ອງ ທີ່ເກົ່າແກ່, ເປ່ເພ ເຈົ້າຂອງໂຮງງານ ຕ້ອງໄດ້ ປະກອບ ສຳນວນ ເອກະສານ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 4 ຂອງ ລະບຽບ ການ ສະບັບນີ້ ແລະ ຕ້ອງປະຕິບັດ ຕາມ ມາດຕາ 32 ຂອງກົດໝາຍ ປ່າໄມ້ ເພື່ອນຳ ສະເໜີ ຂໍອະນຸຍາດ ຈາກ ກະຊວງ ກະສິກຳ ແລະ ປ່າໄມ້ ເສຍກ່ອນ ແລະ ພາຍຫຼັງ ໄດ້ ຮັບ ອະນຸຍາດແລ້ວ ຈຶ່ງສາມາດ ນຳເຂົ້າ ຕາມ ລະບຽບ ຫລັກການ.

**ມາດຕາ 22: ລະບົບ ການລາຍງານ ຂອງໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພົນປ່າໄມ້**

ທຸກ ໆໂຮງງານ ທີ່ທຳການເຄື່ອນໄຫວ ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ຕ້ອງປະຕິບັດ ລະບົບ ລາຍງານ ແຜນການ ນຳເຂົ້າ ວັດຖຸດິບໄມ້ ແລະ ເຄື່ອງປ່າຂອງດົງ, ແຜນການ ໆ ຜະລິດ ແລະ ຈຳໜ່າຍ ຜະລິດຕະພັນ ຂອງຕົນ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ບ່ອນທີ່ຕົນ ສັງກັດຢູ່ ຢ່າງເປັນປະຈຳ ເພື່ອ ສະຫຼຸບ ສັງລວມ ແລ້ວລາຍງານໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບ ຕາມໄລຍະ ທີ່ໄດ້ກຳນົດໄວ້.

ມາດຕາ 23: ບັນດາ ຂໍ້ຫ້າມ

1. ບຸກຄົນ ແລະການຈັດຕັ້ງ ທັງພາຍໃນ ແລະຕ່າງປະເທດ ດຳເນີນການເຄື່ອນໄຫວ ເລື່ອຍໄມ້ ຫຼື ຕັ້ງໂຮງງານປຸງແຕ່ງໄມ້ ໃນປ່າ ແລະ ໃກ້ກັບ ຕົວເມືອງ ທີ່ມີ ຊຸມຊົນແອອັດ.
2. ນຳວັດຖຸດິບ ແລະ ເຄື່ອງປ່າຂອງດົງ ທີ່ບໍ່ມີ ໃບອະນຸຍາດ ຖືກຕ້ອງ ຕາມລະບຽບການ ຂອງລັດ ກ່ຽວກັບ ວຽກງານປ່າໄມ້ ເຂົ້າປ້ອນ ໂຮງງານ ຢ່າງເດັດຂາດ.
3. ນຳເອົາ ເຄື່ອງຈັກຕັດໄມ້, ເຄື່ອງຈັກ ປຸງແຕ່ງໄມ້ ແລະ ປຸງແຕ່ງ ຜະລິດຕະພັນປ່າໄມ້ ທຸກຊະນິດ ເຂົ້າມາ ກ່ອນໄດ້ຮັບ ອະນຸຍາດ ຈາກກະຊວງ ກະສິກຳ ແລະ ປ່າໄມ້.
4. ສ້າງຕັ້ງໂຮງຊອຍ ນອກຂອບເຂດ ຂອງໂຮງເລື່ອຍ ນອກຈາກຈະໄດ້ຮັບອະນຸຍາດພິເສດ ຈາກກະຊວງ ກະສິກຳ ແລະ ປ່າໄມ້ ເທົ່ານັ້ນ.
5. ການແປຮູບ ຫຼື ການປຸງແຕ່ງໄມ້ ທີ່ບໍ່ຖືກ ຕາມຂະໜາດມາດຕະຖານ ຂອງຜະລິດຕະພັນ ຕົວຈິງ ທີ່ ລັດໄດ້ກຳນົດອອກ ໃນ ແຕ່ລະໄລຍະ.

## ໝວດທີ 3

## ໜ້າທີ່ ຂອງເຈົ້າໜ້າທີ່ປ່າໄມ້ ໃນການຄຸ້ມຄອງ, ກວດກາ ໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພັນປ່າໄມ້

ມາດຕາ 24 : ວິທີການແກ້ໄຂ ສິ່ງທີ່ມີຜົນກະທົບ ຕໍ່ສາທາລະນະຊົນ

1. ໃນກໍລະນີ ການດຳເນີນງານ ຂອງໂຮງງານ ເປັນເຫດໃຫ້ ເກີດອັນຕະລາຍຢ່າງຮ້າຍແຮງ ແກ່ສາທາລະນະຊົນ ເຊັ່ນ: ມົນລະພິດ,ອັກຄີໄພ,ເສັຍຊີວິດ ແລະ ຊັບສິນ ຢ່າງຫຼວງຫຼາຍ ແລະ ປະຕິບັດ ບໍ່ຖືກຕ້ອງ ຕາມລະບຽບການ ສະບັບນີ້ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີໜ້າທີ່ ສັ່ງ ໃຫ້ບຸກຄົນ ແລະ ການຈັດຕັ້ງ ຢຸດດຳເນີນ ກິດຈະການ ທັງໝົດ ຫຼື ບາງສ່ວນ ເປັນການຊົ່ວຄາວ ເພື່ອ ປັບປຸງ ແກ້ໄຂ ໂຮງງານນັ້ນ ຄືນໃໝ່ ຕາມໄລຍະເວລາ ທີ່ໄດ້ ກຳນົດໃຫ້ໄວ້.
2. ບຸກຄົນ ແລະ ການຈັດຕັ້ງ ປະຕິເສດ ບໍ່ປ່ຽນແປງ ແລະ ດັດແປງ ຫຼື ບໍ່ສາມາດ ປັບປຸງ ແກ້ໄຂ ໂຮງງານ ໃຫ້ມີ ຄວາມປອດໄພ ແກ່ສາທາລະນະຊົນໄດ້ນັ້ນ, ກະຊວງ ກະສິກຳ ແລະ ປ່າໄມ້ ຈະສັ່ງຍ້າຍ ໂຮງງານ ທັງໝົດ ຫຼື ບາງພາກສ່ວນ ໄປຍັງ ສະຖານທີ່ອື່ນ ເຊິ່ງ ມີຄວາມປອດໄພ ຫຼື ຈະບໍ່ກໍ່ໃຫ້ເກີດ ອັນຕະລາຍ ຮ້າຍແຮງ ແກ່ສາທາລະນະຊົນ.
3. ບຸກຄົນ ແລະ ການຈັດຕັ້ງ ບໍ່ຍົກຍ້າຍໂຮງງານ ພາຍໃນ ໄລຍະ 2 ອາທິດ ພາຍຫຼັງ ໄດ້ມີ ຄຳສັ່ງ ຍົກຍ້າຍໂຮງງານ, ກະຊວງ ກະສິກຳ ແລະ ປ່າໄມ້ ຈະສັ່ງຖອນ ໃບອະນຸຍາດ ດຳເນີນ ກິດຈະການໂຮງງານ ທັນທີ .
4. ບຸກຄົນ ແລະ ການຈັດຕັ້ງ ເມື່ອໄດ້ຮັບ ຄຳສັ່ງ ຍົກຍ້າຍແລ້ວ ຕ້ອງປະຕິບັດ ຕາມມາດຕາ 5 ຂອງລະບຽບການ ສະບັບນີ້. ແຕ່ຄ່າທຳນຽມ ຕ່າງ ໆ ຈະໄດ້ຮັບ ການຍົກເວັ້ນ.

**ມາດຕາ 25 :** ເນື້ອໃນ ຂອງການກວດກາ ໂຮງງານປຸງແຕ່ງໄມ້ ຫຼື ຜະລິດຕະພົນປ່າໄມ້

ພາຍຫຼັງທີ່ໄດ້ ປະຕິບັດ ແຜນການຜະລິດ ຂອງແຕ່ລະໂຮງງານ ສຳເລັດແລ້ວ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕ້ອງຮີບຮ້ອນ ແຕ່ງຕັ້ງ ພະນັກງານປ່າໄມ້ ລົງກວດກາ ສະພາບຕົວຈິງຄືນ. ເນື້ອໃນ ຂອງການກວດກາ ມີດັ່ງນີ້ :

1. ການປະຕິບັດ ພັນທະ ຕໍ່ ງົບປະມານ ຂອງລັດ.
2. ກຳນົດ ໄລຍະອາຍຸ ຂອງໃບອະນຸຍາດດຳເນີນ ກິດຈະການໂຮງງານ ແລະ ໃບອະນຸຍາດ ດຳເນີນ ການຜະລິດ ກະສິກຳ ແລະ ປ່າໄມ້.
3. ຂອບເຂດ ເນື້ອທີ່ ຕາມແຜນຜັງ ຂອງໂຮງງານ ທີ່ໄດ້ ອະນຸມັດ.
4. ສະໜາມ III ຫຼື ສະໜາມ ໂຮງງານ ແລະ ສາງ ສ ບ ເກັບມ້ຽນໄມ້ ເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ແລະ ຜະລິດຕະພົນປ່າໄມ້ ອື່ນ ໆ.
5. ຈຳນວນ ແລະ ຂະໜາດ ຂອງເຄື່ອງຈັກ ຫຼື ແຮງງານ ທີ່ໄດ້ນຳໃຊ້ ເຂົ້າໃນ ການດຳເນີນ ກິດຈະການໂຮງງານ.
6. ສິ່ງເສດເຫຼືອ ຂອງໂຮງງານ ທີ່ອາດຈະ ກໍ່ຜົນເສຍຫາຍ ຕໍ່ ສັງຄົມ ແລະ ສິ່ງແວດລ້ອມ.

**ມາດຕາ 26 :** **ການຄຸ້ມຄອງ, ກວດກາ, ກວດການ ແລະ ປະເມີນຜົນ**

ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ, ເຂດພິເສດ ແລະ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ມີໜ້າທີ່ ຮັບຜິດຊອບ ໃນ ການຄຸ້ມຄອງ, ກວດກາ, ກວດການ ແລະ ປະເມີນຜົນ ແລ້ວລາຍງານ ໃຫ້ກະຊວງ ກະສິກຳ ແລະ ປ່າໄມ້ ຊາບ ໂດຍຖືເອົາ ການກວດກາ ຕາມ ມາດຕາ 66 ຂອງກົດໝາຍ ປ່າໄມ້ ແລະ ລະບຽບການ ຄຸ້ມຄອງໂຮງງານປຸງແຕ່ງໄມ້ ແລະຜະລິດຕະພົນປ່າໄມ້ ເປັນເອກະສານອ້າງອີງ ໃນການ ຈັດຕັ້ງປະຕິບັດ.

**ມາດຕາ 27 :** **ລະບົບລາຍງານ ຫຼັງການກວດກາ**

ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ຕ້ອງແຈ້ງ ເປັນລາຍລັກອັກສອນ ກ່ຽວກັບ ການສັ່ງໂຈະ ການດຳເນີນ ກິດຈະການໂຮງງານ ຊົ່ວຄາວ ຫາກເຫັນວ່າ ມີ ການທຳລາຍ ສິ່ງແວດລ້ອມ ຫຼື ປະຕິບັດ ບໍ່ຖືກຕ້ອງສອດຄ່ອງ ກັບ ລະບຽບການ ສະບັບນີ້ ເກີດຂຶ້ນ ແລ້ວ ລາຍງານ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ໂດຍດ່ວນ ເພື່ອດຳເນີນ ການກວດກາ ໂຮງງານ ແລະ ຕັດສິນວ່າ ຄວນ ອະນຸຍາດໃຫ້ ດຳເນີນຕໍ່, ຢຸດຕິ, ປັບໃໝ ຫຼື ດັດແປງແກ້ໄຂຄືນ. ໃນກໍລະນີ ການດຳເນີນ ກິດຈະການ ໂຮງງານ ຜິດຕໍ່ ລະບຽບ ກົດໝາຍປ່າໄມ້ ຢ່າງໜັກ ຕ້ອງລາຍງານໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ຮັບຮູ້ ເພື່ອລົງສົມທົບ ກວດກາ ເກັບກຳ ຂໍ້ມູນ ລະອຽດ

ແລ້ວປະກອບສຳນວນ ເອກະສານ ທາ ໄອຍະການ ສັ່ງຟ້ອງ ຂຶ້ນສານ ດຳເນີນ ຄະດີ ຕາມ ລະບຽບກົດໝາຍ.

## ໝວດທີ 4

## ພັນທະ, ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 28: ພັນທະ ຂອງ ຜູ້ດຳເນີນ ກິດຈະການ ໂຮງງານປຸງແຕ່ງໄມ້ ແລະ ຜະລິດຕະພັນປ່າໄມ້

ຜູ້ທີ່ໄດ້ຮັບ ອະນຸຍາດໃຫ້ດຳເນີນ ການຜະລິດໂຮງງານປຸງແຕ່ງໄມ້,ໄມ້ປ່ອງ,ຫວາຍ ແລະ ເຄື່ອງປ່າຂອງດົງ ທຸກຂະໜາດ ຕ້ອງໄດ້ປະຕິບັດພັນທະ ຫຼື ມອບຄ່າພັນທະປູກໄມ້ ແລະ ເຄື່ອງປ່າຂອງດົງ ທົດແທນ ແລະ ເສຍພາສີອາກອນຕ່າງໆ ຕາມລະບຽບ ກົດໝາຍ ຢ່າງ ຄົບຖ້ວນ ພ້ອມທັງ ປະກອບສ່ວນ ທາງດ້ານ ທຶນຮອນ ຕາມ ຄວາມເໝາະສົມ ເຂົ້າໃນ ວຽກງານ ພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດເຄື່ອນໄຫວ ທຸລະກິດ ຂອງຕົນ.

### ມາດຕາ 29: ໜ້າທີ່ ຂອງຜູ້ດຳເນີນ ກິດຈະການໂຮງງານ

ໜ້າທີ່ຂອງ ຜູ້ຮັບໃບອະນຸຍາດ ດຳເນີນກິດຈະການໂຮງງານ ຄື :

1. ຮັກສາ ໂຮງງານ ແລະ ເຄື່ອງຈັກ ໃຫ້ຢູ່ໃນ ສະພາບດີ ແລະ ປອດໄພ ຢູ່ສະເໝີ.
2. ຈັດໃຫ້ມີ ເຄື່ອງມື ປະຖົມພະຍາບານ,ທາງອອກສຸກເສີນ,ສັນຍານ ແຈ້ງເຫດອັນຕະລາຍ, ເຄື່ອງດັບເພີງ ຫຼື ເຄື່ອງມື ອຸປະກອນອື່ນ ໆ ທີ່ສາມາດ ປ້ອງກັນ ອັກຄີໄພ.
3. ຈັດໃຫ້ມີ ແສງສະຫວ່າງ ພຽງພໍ ກັບລັກສະນະ ຂອງ ວຽກງານ, ລະບົບ ການກຳຈັດ ສິ່ງ ໂສໂຄກ, ການລະບາຍ ນ້ຳເສຍ ແລະ ການລະບາຍ ອາກາດ.
4. ຈັດໃຫ້ມີ ນ້ຳສະອາດ ສຳລັບດື່ມ, ຫ້ອງນ້ຳ ຄົບຖ້ວນ ແລະ ຫ້ອງທຳຄວາມສະອາດ ຮ່າງກາຍ.
5. ປົກປັກ ຮັກສາ ສິ່ງແວດລ້ອມ ແລະ ຮັບປະກັນ ບໍ່ໃຫ້ເກີດ ເຫດລຳຄານ ເກີນຄວນ ແກ່ ບຸກຄົນອື່ນ ທີ່ຢູ່ໃກ້ຄຽງ, ລວມທັງ ກິ່ນ ແລະ ສຽງ.

### ມາດຕາ 30 : ນະໂຍບາຍ ຕໍ່ຜູ້ມີຜົນງານ

ໂຮງງານ ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງໃດ ຫາກປະຕິບັດ ຂໍ້ກຳນົດ ກົດລະບຽບ ແລະ ກົດໝາຍ ຂອງລັດ ໄດ້ຢ່າງ ຖືກຕ້ອງ ແລະ ເປັນແບບຢ່າງ ນຳໜ້າ ໃນການນຳໃຊ້ ເຕັກໂນໂລຢີ ເຄື່ອງຈັກ ທີ່ທັນສະໄໝ ເຂົ້າໃນ ການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໄດ້ຢ່າງ ມີປະສິດທິຜົນສູງ, ປະຕິບັດພັນທະ ຫຼື ຈ່າຍ ຄ່າພັນທະ ປູກໄມ້ ແລະ ເຄື່ອງປ່າ ຂອງດົງ ທົດແທນ ທັງໝົດ ກ່ອນ ການຂຸດຄົ້ນ ພ້ອມທັງ ສ້າງລາຍຮັບ ເຂົ້າງົບປະມານ ແຫ່ງຊາດ ໄດ້ດີ ໃນ ແຕ່ລະປີ ໂຮງງານນັ້ນ ຈະໄດ້ຮັບ ການຍ້ອງຍໍ ຈາກ ອົງການ ຈັດຕັ້ງ ຂອງລັດ ແຕ່ລະຂັ້ນ ຕາມຄວາມເໝາະສົມ ພ້ອມທັງ ຈະພິຈາລະນາ ເປັນກໍລະນີພິເສດ

ເມື່ອມີ ການສະເໜີ ຂໍອະນຸຍາດ ສືບຕໍ່ດໍາເນີນ ການຜະລິດ,ຂະຫຍາຍ ຫຼືດັດແປງ, ຍ້າຍ ຫຼື ກໍ່ສ້າງໂຮງງານແຫ່ງໃໝ່.

**ມາດຕາ 31 : ມາດຕະການ ຕໍ່ ຜູ້ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ຫາກດໍາເນີນ ການປຸກສ້າງ, ຂະຫຍາຍ ກິດຈະການ ໂຮງງານ, ນໍາຈັກ ຕັດໄມ້ ແລະ ເຄື່ອງຈັກ ປຸງແຕ່ງໄມ້ ຫຼື ຜະລິດຕະພັນປ່າໄມ້ ເຂົ້າມາ ຕິດຕັ້ງ ໃນໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງ ກະສິກໍາ ແລະປ່າໄມ້ ຫຼືດໍາເນີນການ ບໍ່ຖືກຕ້ອງ ຕາມມາດຕາໃດໜຶ່ງ ຂອງລະບຽບການ ສະບັບນີ້ ຈະຖືກປະຕິບັດ ມາດຕະການ ຕາມມາດຕາ 70, 71, 72 ແລະ 73 ຂອງ ກົດໝາຍປ່າໄມ້.

ໂຮງງານໃດຫາກ ທໍາການປຸກສ້າງ ຫຼື ຕິດຕັ້ງເຄື່ອງຈັກ ບໍ່ຖືກຕ້ອງ ຕາມຫຼັກ ວິຊາການ, ຂາດຄວາມເອົາໃຈໃສ່ ທາງດ້ານປ້ອງກັນແຮງງານ ແລະ ສິ່ງແວດລ້ອມ ແລ້ວພາໃຫ້ເກີດ ອຸປະຕິເຫດ ເຮັດໃຫ້ ຄົນງານ ຖືກບາດເຈັບ, ເສັຍອົງຄະ ຫຼື ເສັຍຊີວິດ ແລະ ຊັບສິນ ຢ່າງຫຼວງຫຼາຍ ແລະ ປະຕິບັດ ບໍ່ຖືກຕ້ອງ ຕາມ ມາດຕາ 29 ຂອງລະບຽບການ ສະບັບນີ້ ໂຮງງານນັ້ນ ຕ້ອງເປັນຜູ້ຮັບຜິດຊອບ ທັງໝົດ ຕໍ່ ຜູ້ທີ່ໄດ້ຮັບ ເຄາະຮ້າຍ ແລະ ຜົນເສຍຫາຍອື່ນໆ ຕາມ ລະບຽບກົດໝາຍ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 32 : ການຈັດຕັ້ງປະຕິບັດ**

ທຸກໆກະຊວງ, ອົງການທຽບເທົ່າ, ແຂວງ, ກໍາແພງນະຄອນ ແລະ ເຂດພິເສດ, ທຸກພາກສ່ວນ ເສດຖະກິດ ລວມທັງ ບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຊ່ວຍຊຸກ ຍູ້ການ ປະຕິບັດ ລະບຽບການ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 33 : ຜົນສັກສິດ**

ລະບຽບການສະບັບນີ້ ມີ ຜົນບັງຄັບໃຊ້ ນັບແຕ່ມື້ ລົງລາຍເຊັນ ເປັນຕົ້ນໄປ ທຸກຂໍ້ກໍານົດ ແລະ ກົດລະບຽບ ຂອງກະຊວງ ທີ່ໄດ້ປະກາດໃຊ້ ໃນ ເມື່ອກ່ອນ ຫາກຂັດກັບ ລະບຽບ ການ ສະບັບນີ້ ແມ່ນ ຖືກລົບລ້າງ.

ລັດຖະມົນຕີ ວ່າການ ກະຊວງກະສິກໍາ ແລະ ປ່າໄມ້

ສ່ຽນ ສະພັງທອງ